ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

.........................

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ: 0023 /ສຄຄຊ

ນະຄອນຫຼວງວຽງຈັນ, ລົງວັນທີ .1 9 AUG 2016

# ແຈ້ງການ

ເຖິງ: ພໍ່ແມ່ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງລາຍຊື່ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຫຼັກຊັບ ເພື່ອລະດົມທຶນຈາກມວນຊົນ ແລະ ຈົດທະບຽນ ໃນຕະຫຼາດຫຼັກຊັບລາວ.

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງພໍ່ແມ່ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ຊາບທົ່ວເຖິງກັນວ່າ ຮອດປະຈຸບັນ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອະນຸຍາດໃຫ້ບໍລິສັດ ຈຳນວນໜຶ່ງ **ສາມາດລະດົມທຶນຈາກມວນຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ** ດັ່ງມີລາຍຊື່ ລຸ່ມນີ້:

1. ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ
   EDL Generation Public Company;
2. ທະນາຄານການຄ້າຕ່າງປະເທດລາວມະຫາຊົນ
   BANQUE POUR LE COMMERCE EXTERIEUR LAO PUBLIC;
3. ບໍລິສັດລາວເວີນມະຫາຊົນ
   LAO WORLD PUBLIC COMPANY;
4. ບໍລິສັດປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
   Petroleum Trading Lao Public Company;
5. ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ
   Souvanny Home Center Public Company.

ສ່ວນບໍລິສັດອື່ນທີ່ໄປລະດົມທຶນຈາກພໍ່ແມ່ປະຊາຊົນໃນຮູບແບບການອອກຈຳໜ່າຍ ຮຸ້ນ, ຮຸ້ນກູ້ ຫຼື ຮູບແບບອື່ນທີ່ຄ້າຍຄືກັນ ຖືວ່າເປັນການລະເມີດລະບຽບກົດໝາຍຂອງ ສປປ ລາວ. ຖ້າທ່ານໃດພົບເຫັນປະກົດການທີ່ໜ້າສົງໃສ ກະລຸນາແຈ້ງມາທີ່ **ສຳນັກງານ** ຄະນະກຳມະການຄຸ້ມຄອງຫຼັກຊັບ ໂທ: 021-217-770 ໃນໂມງລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງພໍ່ແມ່ປະຊາຊົນ ເພື່ອຊາບ ຕາມນີ້ດ້ວຍ.

ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ★ ສຳນັກງານ ຄຄຊ ★

**ສາຍສະໝອນ ຈັນທະຈັກ**